**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສຳນັກງານນາຍົກລັດຖະມົນຕີ**

**ຫະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ** **ເລກທີ...06.../ທປຄ**

*ນະຄອນຫຼວງວຽງຈັນ, ວັນທີ 08 ທັນວາ 2009*

# ຄຳແນະນຳ

# ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍສະມາຄົມ

ຄຳແນະນຳສະບັບນີ້ ຜັນຂະຫຍາຍ, ແນະນຳປະຕິບັດ ເນື້ອໃນບາງມາດຕາ ຂອງດຳລັດ ວ່າດ້ວຍສະມາຄົມ ສະບັບເລກທີ **115/ນຍ**, ລົງວັນທີ **29** ເມສາ **2009** (ເອີ້ນຫຍໍ້ວ່າ: ດຳລັດ) ໃຫ້ລະອຽດຈະແຈ້ງຕື່ມ ເພື່ອຈັດຕັ້ງປະຕິບັດ ດຳລັດສະບັບດັ່ງກ່າວນີ້ ຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ.

## I. ອະທິບາຍຄຳສັບ

ບາງຄຳສັບ ແລະ ບາງປະໂຫຍກ ໃນດຳລັດມີຄວາມໝາຍ ດັ່ງລຸ່ມນີ້:

***ບໍ່ຫວັງຜົນກຳໄລ*** ໝາຍເຖິງຊັບສິນ, ລາຍຮັບທີ່ໄດ້ມາຈາກການເຄື່ອນໄຫວຂອງສະມາຄົມ ພາຍຫຼັງຫັກຄ່າໃຊ້ຈ່າຍບໍລິຫານອອກແລ້ວ ສ່ວນທີ່ເຫຼືອບໍ່ໄດ້ນຳມາແບ່ງປັນກັນ, ແຕ່ນຳໄປໃຊ້ຈ່າຍຕາມຈຸດປະສົງທີ່ກຳນົດຢູ່ໃນ ກົດລະບຽບຂອງສະມາຄົມ. ໝາຍຄວາມວ່າ ສະມາຄົມ ສາມາດເຄື່ອນໄຫວທຸລະກິດໄດ້ ບົນພື້ນຖານລະບຽບກົດໝາຍ. ແຕ່ຜົນກຳໄລ, ຊັບສິນທີ່ໄດ້ມານັ້ນ ບໍ່ສາມາດນຳມາແບ່ງປັນໃຫ້ສະມາຊິກ, ຄະນະບໍລິຫານ, ປະທານ, ຮອງປະທານ, ບັນດາກຳມະການ, ຄະນະກວດກາ, ເລຂາທິການ, ພະນັກງານ, ຍາດຕິພີ່ນ້ອງ ຫຼື ຜູ້ໃຫ້ການສະໜັບສະໜູນສະມາຄົມ (ຜູ້ໃດກໍ່ຕາມ). ກົງກັນຂ້າມ, ຜົນກຳໄລທີ່ໄດ້ມາ ຕ້ອງນຳໄປຮັບໃຊ້ວັດຖຸປະສົງລວມຂອງສະມາຄົມ ຕາມທີ່ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.

**ສະມາຄົມທີ່ມີລັກສະນະເສດຖະກິດ** ໝາຍເຖິງສະມາຄົມທີ່ເຄື່ອນໄຫວໃນຂົງເຂດຜະລິດ-ທຸລະກິດ (ກະສິກຳ, ອຸດສາຫະກຳ, ການຄ້າ, ການບໍລິການ).

**ສະມາຄົມທີ່ມີລັກສະນະວິຊາຊີບ, ເຕັກນິກ-ວິຊາການ ແລະ ປະດິດຄິດແຕ່ງ** ໝາຍເຖິງສະມາຄົມທີ່ເຄື່ອນໄຫວໃນຂົງເຂດ ວັດທະນະທຳ-ສັງຄົມ, ສິລະປະ, ວັນນະຄະດີ, ສຶກສາ, ສາທາລະນະສຸກ, ວິທະຍາສາດ, ເຕັກໂນໂລຊີ, ກິລາກາຍະກຳ.

**ສະມາຄົມທີ່ມີລັກສະນະສັງຄົມສົງເຄາະ** ໝາຍເຖິງສະມາຄົມທີ່ເຄື່ອນໄຫວ ເພື່ອມະນຸດສະທຳ, ຊ່ວຍເຫຼືອສັງຄົມ, ຊ່ວຍເຫຼືອຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຊ່ວຍເຫຼືອຄົນພິການ, ສົງເຄາະຜູ້ປະສົບໄພພິບັດ ຈາກທຳມະຊາດ ຫຼື ສົງຄາມ.

**ສະຫະສະມາຄົມ** ໝາຍເຖິງການຈັດຕັ້ງທາງສັງຄົມທີ່ສ້າງຕັ້ງຂຶ້ນ ດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກ ຫຼື ຊຸມຊົນ; ສະຫະສະມາຄົມສ້າງຕັ້ງຂຶ້ນ ໂດຍການເຕົ້າໂຮມກັນຂອງສະມາຄົມຕ່າງໆທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການແລ້ວ ແລະ ເຄື່ອນໄຫວຢູ່ໃນຂົງເຂດ ຫຼື ຂະແໜງການດຽວກັນ, ມີຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມນຳກັນ ສ້າງຕັ້ງສະຫະສະມາຄົມຂຶ້ນ;

**ສະຫະພັນ** ໝາຍເຖິງການຈັດຕັ້ງທາງສັງຄົມທີ່ສ້າງຕັ້ງຂຶ້ນ ດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກ ຫຼື ຊຸມຊົນ; ສະຫະພັນສ້າງຕັ້ງຂຶ້ນ ໂດຍການເຕົ້າໂຮມກັນຂອງສະມາຄົມ, ສະໂມສອນ ຫຼື ການຈັດຕັ້ງສັງຄົມອື່ນທີ່ມີສະມາຊິກ ຫຼື ການຈັດຕັ້ງທາງເສດຖະກິດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການແລ້ວ ແລະ ເຄື່ອນໄຫວຢູ່ໃນຂົງເຂດ, ຂະແໜງການດຽວກັນ ມີຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມນຳກັນ ສ້າງຕັ້ງສະຫະພັນຂຶ້ນ; ສະຫະພັນສ່ວນຫລາຍ ແມ່ນການຈັດຕັ້ງທາງສັງຄົມທີ່ເຄື່ອນໄຫວໃນຂົງເຂດ ຫຼື ຂະແໜງການດ້ານເສດຖະກິດ (ສະຫະພັນວິສາຫະກິດຊາ-ກາເຟ...); ໃນຂົງເຂດກິລາກາຍະກຳ (ສະຫະພັນບານເຕະ, ສະຫະພັນປິງປອງ...); ໃນຂົງເຂດແຮງງານ (ສະຫະພັນແຮງງານ...);

**ສະພາ** ໝາຍເຖິງການຈັດຕັ້ງທາງສັງຄົມທີ່ສ້າງຕັ້ງຂຶ້ນ ດ້ວຍຄວາມສະໝັກໃຈ ຂອງບັນດາສະມາຊິກ ຫຼື ລັດເປັນຜູ້ສ້າງຕັ້ງຂຶ້ນ, ເປັນອົງການ ນຳພາຂັ້ນສູງຂອງບຸກຄົນ ຫຼື ນິຕິບຸກຄົນທີ່ເປັນສະມາຊິກ, ເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ສະມາຊິກ ຫຼື ຂອງຊຸມຊົນ ແລະ ເຄື່ອນໄຫວຢູ່ໃນຂົງເຂດ, ຂະແໜງການດຽວກັນ, ມີວິຊາຊີບ, ເປັນເພດ ຫຼື ຢູ່ໃນໄວອາຍຸ ຫຼື ຊັ້ນຄົນດຽວກັນ. (ສະພາສ່ວນຫລາຍ ແມ່ນລັດເປັນຜູ້ສ້າງຕັ້ງເຊັ່ນ: ສະພາວິທະຍາສາດແຫ່ງຊາດ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ສະພາທະນາຍຄວາມ ແລະ ອື່ນໆ);

**ສະໂມສອນ** ໝາຍເຖິງການຈັດຕັ້ງທາງສັງຄົມທີ່ສ້າງຕັ້ງຂຶ້ນ ດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກ ຫຼື ຊຸມຊົນ; ສະໂມສອນ ສ້າງຕັ້ງຂຶ້ນໂດຍການເຕົ້າໂຮມກັນ ຂອງສະມາຊິກທີ່ເປັນບຸກຄົນ ຫຼື ນິຕິບຸກຄົນຕ່າງໆທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຢ່າງເປັນທາງການແລ້ວ ແລະ

ເຄື່ອນໄຫວຢູ່ໃນຂົງເຂດ, ຂະແໜງການດຽວກັນ; ມີວິຊາຊີບ, ເປັນເພດ ຫຼື ຢູ່ໃນໄວດຽວກັນ, ຊັ້ນຄົນດຽວກັນ, ມີຄວາມສະໝັກ ໃຈ ແລະ ເຫັນດີເຫັນພ້ອມນຳກັນສ້າງຕັ້ງສະໂມສອນຂຶ້ນ;

**ສະມາຄົມປະເພດອື່ນໆ** ທີ່ກຳນົດໃນ ມາດຕາ 7 ຂໍ້ 4 ຂອງດຳລັດ ໝາຍເຖິງສະມາຄົມທີ່ເຄື່ອນໄຫວກ່ຽວພັນເຖິງ ຄວາມນິຍົມຊົມຊອບ, ແນວຄິດຈິດໃຈ, ຄວາມມຸ່ງມາດປາຖະໜາ, ເພດ, ໄວ ທີ່ມີຜົນປະໂຫຍດແກ່ສັງຄົມ.

## II. ເງື່ອນໄຂ, ສຳນວນເອກະສານ, ການພິຈາລະນາ ແລະ ໜ້າທີ່ຄະນະຂົນຂວາຍສ້າງຕັ້ງສະມາຄົມ

### ກ. ຄະນະຂົນຂວາຍສ້າງຕັ້ງສະມາຄົມ

ຈຳນວນຄະນະຂົນຂວາຍສ້າງຕັ້ງສະມາຄົມ ຈະມີຫຼາຍເທົ່າໃດກໍ່ໄດ້ ຂຶ້ນກັບຄວາມຕ້ອງການຂອງຜູ້ລິເລີ່ມ, ແຕ່ບໍ່ໃຫ້ຫຼຸດ **03** ຄົນ ແລະ ຢ່າງໜ້ອຍ ໜຶ່ງໃນຈຳນວນຄະນະຕ້ອງມີວິຊາສະເພາະໃດໜຶ່ງ (ມີໃບປະກາສະນີຍະບັດ, ໃບຢັ້ງຢືນ) ທີ່ສອດຄ່ອງກັບຈຸດປະສົງຂອງສະມາຄົມ. ສຳລັບຂົງເຂດທີ່ສະມາຄົມຈະເຄື່ອນໄຫວນັ້ນ ຖ້າກໍລະນີ ບໍ່ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນ ແມ່ນຢ່າງໜ້ອຍ ໜຶ່ງໃນຄະນະຂົນຂວາຍຕ້ອງມີປະສົບການກ່ຽວກັບຂົງເຂດ ທີ່ສະມາຄົມເຄື່ອນໄຫວ.

### ຂ. ສຳນວນເອກະສານແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມປະກອບມີ:

1. ໃບສະເໜີຂອງຜູ້ລິເລີ່ມສ້າງຕັ້ງສະມາຄົມ ເຖິງ ທປຄ ຫຼື ແຂວງ ຫຼື ນະຄອນ ເພື່ອພິຈາລະນາການແຕ່ງຕັ້ງຄະນະຂົນຂວາຍ;
2. ໃບຢັ້ງຢືນທີ່ຢູ່ຂອງສະມາຊິກຄະນະຂົນຂວາຍ;
3. ໃບຊີວະປະຫວັດຫຍໍ້ຂອງສະມາຊິກຄະນະຂົນຂວາຍ;
4. ໃບແຈ້ງໂທດຂອງສະມາຊິກຄະນະຂົນຂວາຍ;
5. ໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການ ຂອງສະມາຊິກຄະນະຂົນຂວາຍ.

### ຄ. ການພິຈາລະນາກ່ຽວກັບຄະນະຂົນຂວາຍສ້າງຕັ້ງສະມາຄົມ

ເມື່ອ ທປຄ ຫຼື ແຂວງ ຫຼື ນະຄອນ ໄດ້ຮັບໃບສະເໜີຂອງຜູ້ລິເລີ່ມກໍ່ຕັ້ງສະມາຄົມກ່ຽວກັບການແຕ່ງຕັ້ງ ຄະນະຂົນຂວາຍສ້າງຕັ້ງສະມາຄົມແລ້ວ, ພາຍໃນ **30** ວັນ ທປຄ ຫຼື ແຂວງ ຫຼື ນະຄອນ ຕ້ອງແຈ້ງຕອບເຫັນດີ ຫຼື ບໍ່ເຫັນດີ ນຳການແຕ່ງຕັ້ງຄະນະຂົນຂວາຍນັ້ນ.

### ງ. ໜ້າທີ່ຂອງຄະນະຂົນຂວາຍສ້າງຕັ້ງສະມາຄົມ

ເມື່ອໄດ້ຮັບການແຕ່ງຕັ້ງ ແລະ ໄດ້ຮັບການເຫັນດີຈາກ ທປຄ ຫຼື ແຂວງ ຫຼື ນະຄອນແລ້ວ, ຄະນະຂົນຂວາຍມີໜ້າທີ່ຕົ້ນຕໍຄື:

1. ຈັດຕັ້ງຂົນຂວາຍການສ້າງຕັ້ງສະມາຄົມ ແລະ ຮັບເອົາສະມາຊິກສະມາຄົມ; ກໍລະນີມີຄວາມຈຳເປັນ ຈັດຕັ້ງໂຄສະນາຂົນຂວາຍ ດ້ວຍຮູບແບບກອງປະຊຸມທີ່ມີຫຼາຍຄົນເຂົ້າຮ່ວມ ຕ້ອງເຮັດໜັງສືຂໍອະນຸມັດຈາກ ອົງການປົກຄອງແຂວງ ຫຼື ນະຄອນ; ໃນໜັງສືສະເໜີ ໃຫ້ບົ່ງບອກແຈ້ງກ່ຽວກັບ ຈຸດປະສົງ, ເນື້ອໃນ, ຂັ້ນຕອນ ໃນການຂົນຂວາຍ ແລະ ຕ້ອງຮັບປະກັນຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ກະກຽມສຳນວນເອກະສານສ້າງຕັ້ງສະມາຄົມ ໃຫ້ຄົບຖ້ວນຕາມທີ່ກຳນົດຢູ່ໃນ ມາດຕາ 13 ຂອງດຳລັດ;
3. ພາຍຫຼັງທີ່ໄດ້ກະກຽມສຳນວນເອກະສານ ສ້າງຕັ້ງສະມາຄົມສຳເລັດແລ້ວ, ຄະນະຂົນຂວາຍ ສົ່ງສຳນວນເອກະສານມາຍັງອົງການດັ່ງຕໍ່ໄປນີ້:
   - ສະມາຄົມທີ່ຈະເຄື່ອນໄຫວກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງຂອງປະເທດທີ່ກວມເອົາຫຼາຍແຂວງ, ນະຄອນ ສົ່ງສຳນວນເອກະສານມາຍັງ ທປຄ ເພື່ອພິຈາລະນາຕົກລົງ;
   - ສະມາຄົມທີ່ຈະເຄື່ອນໄຫວພາຍໃນ ແຂວງ, ນະຄອນ, ເມືອງ, ເທດສະບານ ຫຼື ບ້ານ ສົ່ງສຳນວນເອກະສານມາຍັງ ຫ້ອງວ່າການປົກຄອງແຂວງ ຫຼື ນະຄອນ ເພື່ອຄົ້ນຄ້ວາ ແລະ ນຳສະເໜີເຖິງເຈົ້າແຂວງ ຫຼື ເຈົ້າຄອງນະຄອນ ເພື່ອພິຈາລະນາຕົກລົງອະນຸມັດສ້າງຕັ້ງ.

## III. ກ່ຽວກັບຈຳນວນຜູ້ທີ່ລົງທະບຽນສະໝັກໃຈເຂົ້າຮ່ວມເປັນສະມາຊິກສະມາຄົມ

1. ສະມາຄົມທີ່ຈະເຄື່ອນໄຫວກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງຂອງປະເທດທີ່ກວມເອົາຫຼາຍແຂວງ, ນະຄອນ ຕ້ອງມີຜູ້ທີ່ໄດ້ລົງທະບຽນຢ່າງຖືກຕ້ອງຈາກຫຼາຍແຂວງ ຢ່າງໜ້ອຍ **25** ຄົນຂຶ້ນໄປ.
2. ສະມາຄົມທີ່ເຄື່ອນໄຫວໃນຂອບເຂດພາຍໃນ ແຂວງ, ນະຄອນ ຕ້ອງມີຜູ້ທີ່ໄດ້ລົງທະບຽນຢ່າງຖືກຕ້ອງ ຢູ່ພາຍໃນແຂວງ ຫຼື ນະຄອນ ຢ່າງໜ້ອຍ **15** ຄົນຂຶ້ນໄປ.
3. ສະມາຄົມທີ່ເຄື່ອນໄຫວໃນຂອບເຂດພາຍໃນ ເມືອງ, ເທດສະບານ ຕ້ອງມີຜູ້ທີ່ໄດ້ລົງທະບຽນຢ່າງຖືກຕ້ອງພາຍໃນ ເມືອງ, ເທດສະບານ ຢ່າງໜ້ອຍ **10** ຄົນຂຶ້ນໄປ.
4. ສຳລັບສະມາຄົມທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ ຫຼື ລະຫ່ວາງແຂວງ, ນະຄອນ ຫຼື ພາຍໃນແຂວງ, ນະຄອນ ຫຼື ພາຍໃນເມືອງ, ເທດສະບານ, ບ້ານ ທີ່ມີລັກສະນະພິເສດ ຈຳນວນຜູ້ທີ່ລົງທະບຽນ ເຂົ້າຮ່ວມເປັນສະມາຊິກສະມາຄົມ ອາດຈະບໍ່ຈຳເປັນຕ້ອງມີຈຳນວນຄົບຖ້ວນຕາມທີ່ກຳນົດຢູ່ໃນດຳລັດກໍໄດ້. ຕົວຢ່າງ: ສະມາຄົມຜູ້ເສຍອົງຄະ (ຕາບອດ, ຫູໜວກ, ປາກກືກ, ແຂນຂາກຸດ...) ທປຄ, ແຂວງ, ນະຄອນ ຈະພິຈາລະນາເປັນແຕ່ລະກໍລະນີ.

## IV. ກ່ຽວກັບເອກະສານຢັ້ງຢືນສຳນັກງານຂອງສະມາຄົມ

ທຸກສະມາຄົມ ຕ້ອງແຈ້ງທີ່ຢູ່ບ່ອນສຳນັກງານສະມາຄົມເຮັດວຽກ ແລະ ແຈ້ງເອກະສານກ່ຽວກັບກຳມະສິດທີ່ດິນ, ຕຶກອາຄານສຳນັກງານນັ້ນ (ກຳມະສິດຂອງຕົນເອງ ຫຼື ເຊົ່າຈາກຄົນອື່ນ). ສຳລັບສະມາຄົມທີ່ເຄື່ອນໄຫວວຽກງານຢູ່ໃນເຂດຊົນນະບົດ, ເຂດຫ່າງໄກຈາກຕົວເມືອງໃຫ້ແຈ້ງຢ່າງໜ້ອຍ ເຮືອນເລກທີ, ໜ່ວຍບ້ານ, ເມືອງ, ແຂວງ ທີ່ສະມາຄົມເຄື່ອນໄຫວຢູ່ນັ້ນ.

## V. ກ່ຽວກັບການຈັດກອງປະຊຸມໃຫຍ່ສ້າງຕັ້ງສະມາຄົມ

ຄະນະຂົນຂວາຍສ້າງຕັ້ງສະມາຄົມ ກະກຽມ ແລະ ຈັດຕັ້ງກອງປະຊຸມໃຫຍ່ຂອງສະມາຄົມຂຶ້ນພາຍໃນ 90 ວັນ ນັບແຕ່ວັນທີ່ໄດ້ຮັບອະນຸຍາດສ້າງຕັ້ງສະມາຄົມ. ເນື້ອໃນຂອງກອງປະຊຸມໃຫຍ່ປະກອບມີ: ອ່ານຂໍ້ຕົກລົງອະນຸມັດສ້າງຕັ້ງສະມາຄົມ, ຜ່ານກົດລະບຽບສະມາຄົມ, ເລືອກຕັ້ງ ຄະນະບໍລິຫານງານ ແລະ ຫົວໜ້າ ຫຼື ປະທານຄະນະກວດກາສະມາຄົມ, ຜ່ານແຜນການເຄື່ອນໄຫວຂອງສະມາຄົມ ແລະ ຜ່ານມະຕິກອງປະຊຸມໃຫຍ່ ສ້າງຕັ້ງສະມາຄົມ.

ພາຍໃນກຳນົດ 90 ວັນ ນັບແຕ່ວັນຂໍ້ຕົກລົງຊົ່ວຄາວອະນຸຍາດສ້າງຕັ້ງສະມາຄົມມີຜົນສັກສິດ, ຄະນະຂົນຂວາຍສ້າງຕັ້ງສະມາຄົມ ຕ້ອງຈັດກອງປະຊຸມໃຫ່ຍຂອງຕົນຂຶ້ນ ເພື່ອສ້າງຕັ້ງສະມາຄົມ. ກໍລະນີພາຍໃນກຳນົດ ເວລາດັ່ງກ່າວນີ້ ບໍ່ສາມາດຈັດກອງປະຊຸມໃຫ່ຍຂຶ້ນໄດ້, ຄະນະຂົນຂວາຍສ້າງຕັ້ງສະມາຄົມ ເຮັດໜັງສືສະເໜີມາຍັງ ທປຄ ຫຼື ແຂວງ ຫຼື ນະຄອນ ເພື່ອຂໍຂະຫຍາຍເວລາອອກຕື່ມ, ອົງການຈັດຕັ້ງລັດດັ່ງກ່າວ ໄດ້ຮັບໜັງສືສະເໜີ ແລ້ວອະນຸຍາດໃຫ້ແກ່ຍາວເວລາອອກໄປຕື່ມແຕ່ບໍ່ເກີນ 60 ວັນ ນັບແຕ່ວັນໝົດກຳນົດ 90 ວັນ ເທົ່ານັ້ນ. ກໍລະນີໝົດກຳນົດເວລາທີ່ອະນຸຍາດ ໃຫ້ແກ່ຍາວເວລາອອກໄປແລ້ວ ແຕ່ສະມາຄົມກໍ່ຍັງບໍ່ສາມາດຈັດກອງປະຊຸມໃຫຍ່ສ້າງຕັ້ງສະມາຄົມຂຶ້ນໄດ້ ເວລານັ້ນ ຂໍ້ຕົກລົງຊົ່ວຄາວອະນຸຍາດສ້າງຕັ້ງສະມາຄົມຈະໝົດຄວາມສັກສິດ ແລະ ຖືວ່າສະມາຄົມບໍ່ສາມາດສ້າງຕັ້ງຂຶ້ນໄດ້.

## VI. ການຮັບຮອງເອົາກົດລະບຽບຂອງສະມາຄົມ

1. ພາຍໃນກຳນົດ 30 ວັນ ນັບແຕ່ວັນປິດກອງປະຊຸມໃຫຍ່, ຄະນະບໍລິຫານງານຂອງສະມາຄົມ ສົ່ງບົດລາຍງານກ່ຽວກັບຜົນຂອງກອງປະຊຸມ, ບົດບັນທຶກການເລືອກຕັ້ງຄະນະບໍລິຫານງານ, ປະທານ, ຮອງປະທານ, ຄະນະກວດກາ, ຮ່າງກົດລະບຽບທີ່ຜ່ານການຮັບຮອງຈາກກອງປະຊຸມໃຫ່ຍແລ້ວ, ມະຕິຂອງກອງປະຊຸມ ພ້ອມດ້ວຍໃບຄຳຮ້ອງສະເໜີຂໍຮັບຮອງເອົາກົດລະບຽບຂອງສະມາຄົມມາຍັງ ທປຄ ສຳລັບ ສະມາຄົມທີ່ເຄື່ອນໄຫວກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງ ຂອງປະເທດທີ່ກວມເອົາຫຼາຍແຂວງ, ນະຄອນ; ສຳລັບສະມາຄົມທີ່ເຄື່ອນໄຫວ ພາຍໃນ ແຂວງ, ນະຄອນ, ເມືອງ, ເທດສະບານ, ບ້ານ ສົ່ງມາຍັງ ຫ້ອງວ່າການ ປົກຄອງແຂວງ ຫຼື ນະຄອນ.

2. ພາຍໃນກຳນົດເວລາ 60 ວັນ ນັບແຕ່ວັນໄດ້ຮັບເອກະສານຕ່າງໆຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດຢູ່ໃນ ມາດຕາ 13 ຂອງດຳລັດ ແລະ ເອກະສານສະເໜີຂໍຮັບຮອງເອົາກົດລະບຽບຂອງສະມາຄົມ. ທປຄ ຫຼື ແຂວງ ຫຼື ນະຄອນ ອີງໃສ່ ກົດໝາຍ, ດຳລັດ, ເນື້ອໃນບົດລາຍງານຜົນກອງປະຊຸມໃຫຍ່ ແລະ ເນື້ອໃນຂອງຮ່າງກົດລະບຽບຂອງສະມາຄົມ ຕະຫຼອດຮອດຄຳເຫັນຂອງກະຊວງ, ອົງການທຽບເທົ່າທີ່ຄຸ້ມຄອງບໍລິຫານລັດທີ່ກ່ຽວຂ້ອງ ເພື່ອພິຈາລະນາຕົກລົງຮັບຮອງເອົາ ຫຼື ບໍ່ຮັບຮອງເອົາ ກົດລະບຽບຂອງສະມາຄົມ. ກົດລະບຽບຂອງສະມາຄົມ ມີຜົນສັກສິດນຳໃຊ້ຢ່າງເປັນທາງການ ນັບແຕ່ວັນທີຂໍ້ຕົກລົງຮັບຮອງເອົາຂອງ ທປຄ ຫຼື ແຂວງ ຫຼື ນະຄອນ ມີຜົນສັກສິດເປັນຕົ້ນໄປ;

ກໍລະນີຮ່າງກົດລະບຽບຂອງສະມາຄົມ ມີເນື້ອໃນຂັດກັບລະບຽບກົດໝາຍ, ຂັດກັບຂໍ້ຫ້າມໃນດຳລັດ; ທປຄ ຫຼື ແຂວງ ຫຼື ນະຄອນ ຈະແນະນຳໃຫ້ຄະນະບໍລິຫານງານຂອງສະມາຄົມປັບປຸງ, ດັດແປງຮ່າງກົດລະບຽບຄືນໃໝ່ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ສອດຄ່ອງກັບເນື້ອໃນຂອງດຳລັດ;

ກໍລະນີບໍ່ສາມາດຮັບຮອງເອົາກົດລະບຽບຂອງສະມາຄົມ, ທປຄ ຫຼື ແຂວງ ຫຼື ນະຄອນ ຈະແຈ້ງໃຫ້ສະມາຄົມຊາບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນທີ່ບໍ່ສາມາດຮັບຮອງເອົາໄດ້.

## VII. ພັນທະຂອງສະມາຄົມ

ສະມາຄົມມີພັນທະເສຍພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ. ໝາຍຄວາມວ່າການເສຍພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ສຳລັບສະມາຄົມແມ່ນບົນພື້ນຖານກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍອາກອນ ຫຼື ກົດໝາຍວ່າດ້ວຍຄ່າທຳນຽມກຳນົດ. ກົດໝາຍດັ່ງກ່າວນີ້ກຳນົດແນວໃດ ແມ່ນປະຕິບັດ ຕາມນັ້ນ (ກົດໝາຍ ກຳນົດໃຫ້ເສຍກໍ່ຕ້ອງເສຍ, ກຳນົດບໍ່ຕ້ອງເສຍກໍ່ບໍ່ຕ້ອງເສຍພາສີ, ອາກອນ ຫຼື ຄ່າທຳນຽມຕ່າງໆ).

## VIII. ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນຂອງສະມາຄົມ ມີຄະນະບໍລິຫານງານ, ປະທານ, ຮອງປະທານ, ບັນດາກຳມະການຄະນະບໍລິຫານງານ, ຄະນະກວດກາ, ເລຂາທິການ, ພະນັກງານບໍລິຫານ ແລະ ບຸກຄະລາກອນຕຳແໜ່ງອື່ນໆ (ປະທານກິດຕິມະສັກ, ທີ່ປຶກສາ) ຕາມກຳນົດຢູ່ໃນ ກົດລະບຽບຂອງສະມາຄົມ.

ຄະນະບໍລິຫານງານ ເລືອກຕັ້ງຄະນະປະຈຳ (ຖ້າຈຳເປັນ), ປະທານ, ຮອງປະທານ, ຄະນະກວດກາຂອງສະມາຄົມ, ເລຂາທິການ, ຮັບຮອງເອົາການເລືອກຕັ້ງ ຫົວໜ້າ ຫຼື ປະທານຄະນະກວດກາ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າຫົວໜ່ວຍການຈັດຕັ້ງຕ່າງໆທີ່ຂຶ້ນກັບສະມາຄົມ.

## IX. ພະນັກງານບໍລິຫານ, ເງິນເດືອນ ແລະ ງົບປະມານ ຂອງສະມາຄົມ

1. ພະນັກງານທີ່ເຮັດວຽກເປັນປະຈຳ ຢູ່ໃນສຳນັກງານຂອງສະມາຄົມໂດຍ ແມ່ນສະມາຄົມເປັນຜູ້ກຳນົດເອງ. ເງິນເດືອນ ແລະ ລະບອບນະໂຍບາຍຕ່າງໆ ຕໍ່ເຂົາເຈົ້າແມ່ນປະຕິບັດຕາມກົດລະບຽບຂອງສະມາຄົມ ແລະ ເອົາຈາກແຫຼ່ງງົບປະມານຂອງສະມາຄົມເອງ. ສຳລັບພະນັກງານລັດຖະກອນ ທີ່ເຮັດວຽກຢູ່ໃນສະຫະສະມາຄົມ, ສະຫະພັນ, ສະມາຄົມຕ່າງໆຖ້າໄດ້ຮັບເງິນ ເດືອນ, ນະໂຍບາຍຈາກລັດແມ່ນປະຕິບັດຕາມລະບຽບ ການຂອງລັດວາງອອກ.
2. ງົບປະມານສຳລັບການເຄື່ອນໄຫວຂອງສະມາຄົມ ແມ່ນປະຕິບັດຕາມຫຼັກການກຸ້ມຕົນເອງ. ໃນກໍລະນີ ສະມາຄົມໄດ້ຮັບການສະໜັບສະໜູນດ້ານການເງິນຈາກລັດ ແມ່ນປະຕິບັດຕາມລະບຽບກົດໝາຍ ແລະ ລະບຽບການເງິນ, ງົບປະມານຂອງລັດວາງອອກ.

## X. ການຮັບເອົາສະມາຊິກສະໜັບສະໜູນ ແລະ ສະມາຊິກກິດຕິມະສັກ

1. ອະນຸຍາດໃຫ້ທຸກໆປະເພດສະມາຄົມ ຮັບເອົາສະມາຊິກສະໜັບສະໜູນ ແລະ ສະມາຊິກກິດຕິມະສັກ ຜູ້ທີ່ເປັນພົນລະເມືອງລາວ ຫຼື ການຈັດຕັ້ງຂອງຄົນລາວເທົ່ານັ້ນ.
2. ສຳລັບສະມາຄົມທີ່ມີລັກສະນະເສດຖະກິດ ອະນຸຍາດໃຫ້ຮັບເອົາສະມາຊິກສະໜັບສະໜູນ ແລະ ສະມາຊິກກິດຕິມະສັກ ທີ່ເປັນວິສາຫະກິດຂອງຕ່າງປະເທດ ມີທຶນຮ້ອຍເປີເຊັນ ຫຼື ວິສາຫະກິດຫຸ້ນສ່ວນ ກັບຕ່າງປະເທດໄດ້.

ວິທີການຮັບເອົາ ຫຼື ພັນທະຂອງສະມາຊິກສະໜັບສະໜູນ ແລະ ສະມາຊິກກິດຕິມະສັກ ແມ່ນໃຫ້ປະຕິບັດຕາມກົດລະບຽບຂອງແຕ່ລະປະເພດສະມາຄົມ.

## XI. ການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງສະມາຄົມຢູ່ທ້ອງຖິ່ນ, ການປ່ຽນແປງ ບຸກຄະລາກອນ ແລະ ທີ່ຕັ້ງສຳນັກງານຂອງສະມາຄົມ

### ກ. ການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາ:

ອະນຸຍາດໃຫ້ສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງສະມາຄົມຢູ່ທ້ອງຖິ່ນ ສະເພາະແຕ່ສະມາຄົມເຄື່ອນໄຫວໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງຂອງປະເທດ ທີ່ກວມເອົາຫຼາຍແຂວງ, ນະຄອນເທົ່ານັ້ນ. ແຕ່ກ່ອນຈະສ້າງຕັ້ງຈະຕ້ອງຂໍອະນຸຍາດຈາກ ເຈົ້າແຂວງ ຫຼື ເຈົ້າຄອງນະຄອນ ບ່ອນທີ່ສະມາຄົມ ຈະຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນຢູ່ນັ້ນເສຍກ່ອນ.

ສຳນວນເອກະສານຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາ ມີດັ່ງນີ້:

1. ສຳເນົາໃບອະນຸຍາດສ້າງຕັ້ງສະມາຄົມ;
2. ໃບຄຳຮ້ອງຂໍອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາ ໃນໃບຄຳຮ້ອງ ຄວນບົ່ງບອກແຈ້ງ ຄວາມຈຳເປັນກ່ຽວກັບການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາ;

ຈຳນວນສະມາຊິກສະມາຄົມ ທີ່ເຕົ້າໂຮມຢູ່ໃນທ້ອງຖິ່ນນັ້ນ ມີເທົ່າໃດ; ພ້ອມທັງກິດຈະກຳຕົ້ນຕໍທີ່ໄດ້ປະຕິບັດ ແລະ ຈະສືບຕໍ່ປະຕິບັດຢູ່ໃນທ້ອງຖິ່ນນັ້ນ; ທີ່ຕັ້ງຂອງສຳນັກງານຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງສະມາຄົມ (ເຮືອນເລກທີ, ຖະໜົນ, ບ້ານ, ເມືອງ, ແຂວງ, ເບີໂທລະສັບ, ແຟັກ, ອີເມວ, ເວັບໄຊທ໌);

ພາຍຫຼັງໄດ້ຮັບການເຫັນດີຈາກ ອົງການການປົກຄອງແຂວງ ຫຼື ນະຄອນ ໃຫ້ຄະນະນຳສະມາຄົມ ລາຍງານເປັນລາຍລັກອັກສອນ ມາຍັງ ທປຄ ແລະ ກະຊວງ, ອົງການຄຸ້ມຄອງບໍລິຫານລັດກ່ຽວກັບ ຂົງເຂດ ຫຼື ຂະແໜງການ ທີ່ສະມາຄົມເຄື່ອນໄຫວຊາບ.

**ຂ. ເມື່ອມີການປ່ຽນແປງທີ່ຢູ່ສຳນັກງານບ່ອນເຮັດວຽກຂອງສະມາຄົມ ແລະ ປ່ຽນແປງ ປະທານ, ຮອງປະທານ, ເລຂາທິການ, ຫົວໜ້າຄະນະກວດກາ ຂອງສະມາຄົມ ໃຫ້ລາຍງານເປັນລາຍລັກອັກສອນ ມາຍັງອົງການຈັດຕັ້ງລັດທີ່ມີສິດອຳນາດຄື:**

1. ສຳລັບສະມາຄົມທີ່ຈະເຄື່ອນໄຫວກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງ ຂອງປະເທດທີ່ກວມເອົາຫຼາຍແຂວງ, ນະຄອນ ຄະນະນຳສະມາຄົມ ໃຫ້ສົ່ງເອກະສານລາຍງານມາຍັງ ທປຄ ແລະ ກະຊວງທີ່ຄຸ້ມຄອງຂົງເຂດ, ຂະແໜງການທີ່ສະມາຄົມເຄື່ອນໄຫວ;
2. ສຳລັບສະມາຄົມທີ່ເຄື່ອນໄຫວພາຍໃນແຂວງ, ນະຄອນ ຄະນະນຳສະມາຄົມ ໃຫ້ສົ່ງເອກະສານມາຍັງ ແຂວງ, ນະຄອນ ແລະ ພະແນກ ທີ່ຄຸ້ມຄອງບໍລິຫານລັດກ່ຽວກັບຂົງເຂດ ຫຼື ຂະແໜງການທີ່ສະມາຄົມເຄື່ອນໄຫວ;
3. ສຳລັບສະມາຄົມທີ່ເຄື່ອນໄຫວພາຍໃນ ເມືອງ, ເທດສະບານ, ບ້ານ ຄະນະນຳສະມາຄົມ ໃຫ້ສົ່ງເອກະສານ, ບົດລາຍງານມາຍັງ ຫ້ອງວ່າການປົກຄອງແຂວງ ຫຼື ນະຄອນ ແລະ ຫ້ອງວ່າການປົກຄອງເມືອງ ຫຼື ເທດສະບານ;
4. ບົດລາຍງານກ່ຽວກັບການປ່ຽນແປງສຳນັກງານຂອງສະມາຄົມ ຈະຕ້ອງບົ່ງບອກແຈ້ງທີ່ຕັ້ງ ສຳນັກງານໃໝ່ (ເຮືອນເລກທີ, ຖະໜົນ, ບ້ານ, ເມືອງ, ແຂວງ, ເບີໂທລະສັບ, ແຟັກ ອີເມວ, ເວັບໄຊທ໌);
5. ບົດລາຍງານກ່ຽວກັບການປ່ຽນແປງປະທານ, ຮອງປະທານ, ຄະນະກວດກາ, ເລຂາທິການ ຫຼື ຕຳແໜ່ງສຳຄັນອື່ນໆ ຕ້ອງຄັດຕິດມະຕິກອງປະຊຸມກ່ຽວກັບ ການເລືອກຕັ້ງຕຳແໜ່ງດັ່ງກ່າວ ພ້ອມທັງປະຫວັດຫຍໍ້ຂອງຄະນະໃໝ່.

## XII. ການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງສະມາຄົມ.

ລວມຍອດລາຍຈ່າຍບໍລິຫານປົກກະຕິບໍ່ເກີນ 25% ຂອງແຜນການລາຍຈ່າຍປະຈຳປີຂອງສະມາຄົມໝາຍຄວາມວ່າການໃຊ້ຈ່າຍການເງິນຂອງສະມາຄົມ ແມ່ນປະຕິບັດຕາມກົດລະບຽບຂອງສະມາຄົມກຳນົດ, ແຕ່ເພື່ອຫຼີກເວັ້ນການໃຊ້ຈ່າຍຮັບໃຊ້ບໍລິຫານຫຼາຍ

ກວ່າຄວາມຈຳເປັນ ຈຶ່ງກຳນົດເພດານສູງໄວ້ບໍ່ໃຫ້ເກີນ 25% ຂອງແຜນການລາຍຈ່າຍປະຈຳປີ ຂອງສະມາຄົມ.

## XIII. ການໂຮມ, ການແຍກ, ການປ່ຽນຊື່ ແລະ ການຍຸບເລີກສະມາຄົມ

1. ການໂຮມສອງ ຫຼື ຫຼາຍສະມາຄົມເຂົ້າກັນເປັນສະມາຄົມດຽວ; ການແຍກສະມາຄົມໜຶ່ງເປັນສອງ ຫຼື ຫຼາຍກ່ວາສອງສະມາຄົມ; ການປ່ຽນຊື່ ແລະ ການຍຸບເລີກສະມາຄົມ ແມ່ນປະຕິບັດຕາມຫຼັກການຕົນຕົວ ສະໝັກໃຈ ຂອງສະມາຊິກສະມາຄົມ ແລະ ຕາມກົດລະບຽບ ຂອງສະມາຄົມຊຶ່ງຂັ້ນຕອນມີຄື: ຄະນະບໍລິຫານງານສະມາຄົມ ປະຊຸມປຶກສາຫາລືກັນກ່ອນ, ຫຼັງຈາກນັ້ນ ນຳໄປຜ່ານກອງປະຊຸມໃຫຍ່ສະມາຄົມ ເພື່ອພິຈາລະນາຕົກລົງເຫັນດີ ຫຼື ບໍ່ເຫັນດີ. ພາຍຫຼັງກອງປະຊຸມໃຫຍ່ໄດ້ມີມະຕິຕົກລົງໂຮມ, ແຍກ, ປ່ຽນຊື່ ຫຼື ຍຸບເລີກສະມາຄົມແລ້ວ, ຄະນະບໍລິຫານງານສະມາຄົມ ສະເໜີມາຍັງ ທປຄ ຫຼື ແຂວງ ຫຼື ນະຄອນ ເພື່ອຮັບຮອງ.

   ການໂຮມ, ການແຍກ, ການປ່ຽນຊື່ ແລະ ການຍຸບເລີກສະມາຄົມ ຈະມີຜົນສັກສິດນັບແຕ່ ທປຄ ຫຼື ແຂວງ ຫຼື ນະຄອນ ອອກຂໍ້ຕົກລົງຮັບຮອງເອົາເປັນຕົ້ນໄປ.
2. **ການສັ່ງຍຸບເລີກສະມາຄົມ** ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 40 ຂໍ້ 4 ຂອງດຳລັດ, ທປຄ ຫຼື ແຂວງ ຫຼື ນະຄອນ ຈະອອກຂໍ້ຕົກລົງໃຫ້ຍຸບເລີກສະມາຄົມ ໃນກໍລະນີທີ່ສະມາຄົມບໍ່ມີການເຄື່ອນໄຫວວຽກງານ ເປັນເວລາ 12 ເດືອນ ຕິດຕໍ່ກັນເຊັ່ນ: ບໍ່ປະຕິບັດພາລະບົດບາດ, ໜ້າທີ່ ແລະ ພັນທະຂອງຕົນ, ຄະນະບໍລິຫານງານ ບໍ່ມີການປະຊຸມ, ຄະນະປະຈຳ (ຖ້າມີ) ບໍ່ປະຈຳການຕາມທີ່ກຳນົດໄວ້ໃນກົດລະບຽບຂອງສະມາຄົມ ຫຼື ກໍລະນີພິສູດໄດ້ວ່າ ສະມາຄົມລະເມີດຂໍ້ຫ້າມ ໃນມາດຕາ 20 ຂອງດຳລັດ ຫລື ລະເມີດລະບຽບກົດໝາຍ ຢ່າງຮ້າຍແຮງ.
3. **ການສ້າງຕັ້ງສະມາຄົມໃໝ່ຫຼັງການໂຮມ ການແຍກສະມາຄົມ**: ໃຫ້ປະກອບເອກະສານຕາມເນື້ອໃນ ທີ່ກຳນົດຢູ່ໃນ ມາດຕາ 13 ຂອງດຳລັດ.

## XIV. ການແກ້ໄຂກໍລະນີ ລ່ວງລະເມີດກົດລະບຽບຂອງສະມາຄົມກ່ຽວກັບການຈັດກອງປະຊຸມໃຫຍ່ສາມັນ

ກໍລະນີຮອດກຳນົດເວລາຈັດກອງປະຊຸມໃຫຍ່ສາມັນຂອງສະມາຄົມແລ້ວ ສະມາຄົມບໍ່ສາມາດຈັດກອງປະຊຸມໃຫຍ່ຂຶ້ນໄດ້ ທປຄ ຫຼື ແຂວງ ຫຼື ນະຄອນ ຈະອອກແຈ້ງການໃຫ້ສະມາຄົມຈັດກອງປະຊຸມໃຫຍ່ຂອງຕົນຂຶ້ນ ພາຍໃນກຳນົດ 180 ວັນ ນັບແຕ່ວັນໄດ້ຮັບແຈ້ງການ. ຖ້າຫາກໝົດກຳນົດເວລາດັ່ງກ່າວ ແຕ່ຍັງບໍ່ສາມາດຈັດກອງປະຊຸມໃຫຍ່ຂອງຕົນຂຶ້ນໄດ້ອີກ ທປຄ ຫຼື ແຂວງ ຫຼື ນະຄອນ ຈະແກ້ໄຂ ດ້ວຍວິທີການດັ່ງນີ້:

- ສັ່ງຢຸດຕິສິດບໍລິຫານສະມາຄົມຂອງປະທານຄະນະບໍລິຫານງານສະມາຄົມ ແລ້ວແຕ່ງຕັ້ງ ສະມາຊິກໃນຄະນະບໍລິຫານງານຂອງສະມາຄົມ ຜູ້ໃດຜູ້ໜຶ່ງເປັນ ຜູ້ບໍລິຫານສະມາຄົມ ຊົ່ວຄາວ ຈົນກວ່າຈະຈັດກອງປະຊຸມໃຫຍ່ຂຶ້ນ ແລະ ເລືອກຕັ້ງໄດ້ ຄະນະບໍລິຫານງານ ຊຸດໃໝ່; ຫຼື
- ຈັດກອງປະຊຸມຄະນະບໍລິຫານງານສະມາຄົມຂຶ້ນ ເພື່ອແຕ່ງຕັ້ງ ຄະນະກະກຽມ ກອງ ປະຊຸມໃຫຍ່ສະມາຄົມ. ແຕ່ຫຼັງຈາກນັ້ນ ກໍ່ຍັງບໍ່ສາມາດຈັດປະຊຸມໃຫຍ່ ຂຶ້ນໄດ້ອີກ ສະມາຄົມຈະຖືກສັ່ງໃຫ້ຍຸບເລີກ ຕາມທີ່ໄດ້ກຳນົດຢູ່ໃນ ມາດຕາ 40 ຂໍ້ 4 ຂອງດຳລັດ.

## XV. ການແຈ້ງ ແລະ ການລາຍງານຜົນຂອງກອງປະຊຸມໃຫຍ່ສາມັນ ຂອງສະມາຄົມ

ກ່ອນເປີດກອງປະຊຸມໃຫຍ່ຂອງສະມາຄົມ, ໃຫ້ຄະນະນຳຂອງສະມາຄົມ ແຈ້ງເປັນ ລາຍລັກອັກສອນ ກ່ຽວກັບເນື້ອໃນຂອງກອງປະຊຸມ ແລະ ລາຍຊື່ບຸກຄະລາກອນ ທີ່ຄາດ ຄະເນວ່າ ຈະເປັນປະທານ ຫຼື ຮອງປະທານຄະນະບໍລິຫານງານສະມາຄົມໃຫ້ ທປຄ ຫຼື ແຂວງ ຫຼື ນະຄອນ ລ່ວງໜ້າກ່ອນ ຢ່າງໜ້ອຍ 30 ວັນ. ຫຼັງຈາກກອງປະຊຸມໃຫຍ່ສຳເລັດ ແລ້ວລາຍ ງານຜົນກອງປະຊຸມໃຫ້ ທປຄ ຫຼື ແຂວງ ຫຼື ນະຄອນ ຢ່າງຊ້າບໍ່ເກີນ 30 ວັນ.

ກໍລະນີ ບໍ່ແຈ້ງໃຫ້ຊາບລ່ວງໜ້າກ່ອນການເປີດກອງປະຊຸມໃຫຍ່ ຫຼື ບໍ່ລາຍງານຜົນສຳເລັດ ຂອງກອງປະຊຸມໃຫຍ່, ທປຄ ຫຼື ແຂວງ ຫຼື ນະຄອນ ຈະແຈ້ງໃຫ້ສະມາຄົມຢຸດຕິການດຳເນີນ ກອງປະຊຸມໃຫຍ່ນັ້ນ ຫຼື ບໍ່ຮັບຮອງເອົາຜົນຂອງກອງປະຊຸມໃຫຍ່ສະມາຄົມ.

## XVI. ໜ້າທີ່ຂອງອົງການຄຸ້ມຄອງບໍລິຫານລັດ ກ່ຽວກັບສະມາຄົມ

**ກ. ທປຄ ຊ່ວຍລັດຖະບານຄຸ້ມຄອງບໍລິຫານລັດຢ່າງເປັນເອກະພາບ ໃນຂອບເຂດທົ່ວ ປະເທດ ກ່ຽວກັບສະມາຄົມ; ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງແຂວງ ຫຼື ນະຄອນ ດຳເນີນການຄຸ້ມຄອງບໍລິຫານລັດ ກ່ຽວກັບສະມາຄົມ ຕາມກຳນົດຢູ່ໃນ ມາດຕາ 51 ຂອງດຳລັດ ພ້ອມທັງມີໜ້າທີ່ຮັບຜິດຊອບອື່ນໆອີກຄື:**

1. ລາຍງານ ຫລື ຂໍຄຳເຫັນຊີ້ນຳຈາກ ລັດຖະບານ, ນາຍົກລັດຖະມົນຕີ, ຮອງນາຍົກ ລັດຖະມົນຕີ ເປັນປະຈຳກ່ຽວກັບວຽກງານສະມາຄົມ;
2. ຂໍຄຳເຫັນຢ່າງເປັນລາຍລັກອັກສອນນຳກະຊວງ, ອົງການຄຸ້ມຄອງຂົງເຂດ ຫຼື ຂະແໜງການທີ່ສະມາຄົມເຄື່ອນໄຫວ ກ່ອນທີ່ຈະພິຈາລະນາອະນຸມັດສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ, ປ່ຽນຊື່ ສະມາຄົມ;
3. ພິຈາລະນາຮັບຮອງເອົາ ກົດລະບຽບຂອງສະມາຄົມທີ່ຈະເຄື່ອນໄຫວກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງ ຂອງປະເທດທີ່ກວມເອົາຫຼາຍແຂວງ, ນະຄອນ;

4. ແນະນຳ, ຝຶກອົບຮົມ, ບຳລຸງຍົກລະດັບດ້ານວຽກງານການຈັດຕັ້ງສັງຄົມເວົ້າລວມ, ວຽກງານສະມາຄົມເວົ້າສະເພາະ ໃຫ້ແກ່ພະນັກງານ-ລັດຖະກອນ ຜູ້ທີ່ຮັບຜິດຊອບວຽກງານດັ່ງກ່າວຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ.

**ຂ. ກະຊວງ, ອົງການທຽບເທົ່າກະຊວງ ມີໜ້າທີ່ຮັບຜິດຊອບດັ່ງນີ້:**

1. ສ້າງເງື່ອນໄຂ, ແນະນຳ ແລະ ຕິດຕາມກວດກາ ຢ່າງເປັນປົກກະຕິ ເພື່ອໃຫ້ສະມາຄົມເຄື່ອນໄຫວຖືກຕ້ອງຕາມ ລະບຽບກົດໝາຍ ແລະ ລະບຽບການຕ່າງໆ ທີ່ພວມນຳໃຊ້ຢູ່ໃນຂົງເຂດ, ຂະແໜງການຂອງຕົນ;
2. ສ້າງໂອກາດ ເພື່ອໃຫ້ສະມາຄົມມີສ່ວນຮ່ວມເຂົ້າໃນການເຄື່ອນໄຫວຕ່າງໆ ທີ່ນອນຢູ່ໃນຂົງເຂດ, ຂະແໜງການທີ່ກະຊວງຄຸ້ມຄອງ ບົນພື້ນຖານຄວາມສາມາດຂອງກະຊວງ ແລະ ຂອງສະມາຄົມ;
3. ແນະນຳພະແນກການ, ຫ້ອງວ່າການປົກຄອງ, ຫ້ອງການຂະແໜງການ ແລະ ອົງການຈັດຕັ້ງອື່ນໆຢູ່ຂັ້ນທ້ອງຖິ່ນ ໃນການຄຸ້ມຄອງການເຄື່ອນໄຫວຂອງສະມາຄົມທີ່ນອນຢູ່ໃນຂົງເຂດ, ຂະແໜງການທີ່ກະຊວງຄຸ້ມຄອງ;
4. ຄົ້ນຄວ້າປະກອບຄຳເຫັນຕໍ່ການສ້າງຕັ້ງ, ການໂຮມ, ການແຍກ, ການຍຸບເລີກສະມາຄົມ ດ້ວຍຄວາມຮັບຜິດຊອບສູງ ແລະ ມີເຫດມີຜົນ ໂດຍອີງໃສ່ແນວທາງ, ນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ໃນຂະແໜງການຂອງລັດທີ່ພັກ-ລັດ ແລະ ກະຊວງ ວາງອອກ.

**ຄ. ອົງການປົກຄອງແຂວງ ຫຼື ນະຄອນ ມີໜ້າທີ່ຮັບຜິດຊອບ:**

1. ສ້າງເງື່ອນໄຂເພື່ອຊ່ວຍເຫຼືອສະມາຄົມເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ. ຊຸກຍູ້ສົ່ງເສີມໃຫ້ສະມາຄົມເຄື່ອນໄຫວ ເພື່ອພັດທະນາ ແລະ ຊ່ວຍເຫຼືອສັງຄົມ ໃນຂົງເຂດການສຶກສາ, ສາທາລະນະສຸກ, ສິລະປະວັນນະຄະດີ, ຖ່າຍທອດວິທະຍາສາດ-ເຕັກໂນໂລຊີ, ກິລາກາຍຍະກຳ, ອະນຸລັກສິ່ງແວດລ້ອມ ແລະ ອື່ນໆ ຂອງທ້ອງຖິ່ນ;
2. ພິຈາລະນາຮັບຮອງເອົາກົດລະບຽບຂອງສະມາຄົມ ທີ່ເຄື່ອນໄຫວໃນຂອບເຂດແຂວງ, ນະຄອນ;
3. ພິຈາລະນາ ແລະ ສ້າງເງື່ອນໄຂເພື່ອໃຫ້ສະມາຄົມມີສ່ວນຮ່ວມເຂົ້າໃນການບໍລິການສາທາລະນະ ຕາມຄວາມສາມາດຕົວຈິງຂອງສະມາຄົມ;
4. ສຳລັບສະມາຄົມໃດທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່ ຍັງປະສົບກັບຄວາມຫຍຸ້ງຍາກຫຼາຍໃນເບື້ອງຕົ້ນ ອາດຈະເຄື່ອນໄຫວບໍ່ທັນມີປະສິດທິຜົນສູງ ຫຼື ບໍ່ເປັນປົກກະຕິດີ ອົງການ

ປົກຄອງຂັ້ນຕ່າງໆ ທີ່ມີເງື່ອນໄຂຄວນໃຫ້ຄວາມຊ່ວຍເຫຼືອເພື່ອສາມາດເຄື່ອນໄຫວເປັນປົກກະຕິ, ມີປະສິດທິຜົນດີຂຶ້ນ.

**ງ. ຫ້ອງວ່າການປົກຄອງແຂວງ ຫຼື ນະຄອນ ມີໜ້າທີ່ຮັບຜິດຊອບດັ່ງນີ້:**

1. ຄົ້ນຄວ້າເປັນເສນາທິການຊ່ວຍ ອົງການປົກຄອງແຂວງ ຫຼື ນະຄອນ ໃນການຕິດຕາມ, ຄຸ້ມຄອງສະມາຄົມຢູ່ທ້ອງຖິ່ນ; ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນຂະບວນການສ້າງຕັ້ງ ແລະ ເຄື່ອນໄຫວຂອງສະມາຄົມ; ສົມທົບກັບຂະແໜງການທີ່ກ່ຽວຂ້ອງເພື່ອສ້າງເງື່ອນໄຂໃຫ້ສະມາຄົມ ເຄື່ອນໄຫວວຽກງານມີປະສິດທິຜົນ;
2. ຂໍຄຳເຫັນເປັນລາຍລັກອັກສອນຈາກ ພະແນກການ ຫຼື ຫ້ອງການຂະແໜງການສາຍຕັ້ງທີ່ຄຸ້ມຄອງກ່ຽວກັບ ຂົງເຂດ, ຂະແໜງການທີ່ສະມາຄົມຈະເຄື່ອນໄຫວເພື່ອຄົ້ນຄ້ວາ ແລະ ນຳສະເໜີ ທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນ ພິຈາລະນາຮັບຮອງເອົາຄະນະຂົນຂວາຍ, ຕົກລົງອະນຸມັດໃຫ້ສ້າງຕັ້ງ, ໂຮມເຂົ້າກັນ, ແຍກອອກຈາກກັນ, ຍຸບເລີກ, ປ່ຽນຊື່ ແລະ ຮັບຮອງເອົາກົດລະບຽບ ຂອງສະມາຄົມ.
3. ສະຫຼຸບສັງລວມສະພາບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງສະມາຄົມ ຢູ່ພາຍໃນ ແຂວງ, ນະຄອນ ເພື່ອລາຍງານ ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ຫົວໜ້າ ຫປຄ.

**ຈ. ພະແນກ, ຂະແໜງການຂັ້ນແຂວງ ມີໜ້າທີ່ຮັບຜິດຊອບດັ່ງນີ້:**

1. ສ້າງເງື່ອນໄຂ, ແນະນຳ ແລະ ຕິດຕາມກວດກາຢ່າງເປັນປົກກະຕິ ເພື່ອໃຫ້ສະມາຄົມເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ ແລະ ລະບຽບການຕ່າງໆ ທີ່ພວມນຳໃຊ້ຢູ່ໃນທ້ອງຖິ່ນ, ຂະແໜງການຂອງຕົນ;
2. ສ້າງໂອກາດ ເພື່ອໃຫ້ສະມາຄົມມີສ່ວນຮ່ວມເຂົ້າໃນການເຄື່ອນໄຫວຕ່າງໆ ທີ່ນອນຢູ່ໃນທ້ອງຖິ່ນ, ຂະແໜງການຂອງຕົນ ບົນພື້ນຖານຄວາມສາມາດຕົວຈິງ;
3. ຄົ້ນຄວ້າປະກອບຄຳເຫັນຕໍ່ການສ້າງຕັ້ງ, ການໂຮມ, ການແຍກ, ການຍຸບເລີກສະມາຄົມ ດ້ວຍຄວາມຮັບຜິດຊອບສູງ ແລະ ມີເຫດມີຜົນ ໂດຍອີງໃສ່ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ໃນຂະແໜງການຂອງຕົນທີ່ພັກ-ລັດ ແລະ ກະຊວງ ວາງອອກ.

## XVII. ການຈັດຕັ້ງປະຕິບັດ

ບັນດາສະມາຄົມທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວມາກ່ອນມີດຳລັດ ແມ່ນປະຕິບັດດັ່ງນີ້:

1. ສຳລັບສະມາຄົມໃດທີ່ສ້າງຕັ້ງຂຶ້ນ ໂດຍດຳລັດຂອງນາຍົກລັດຖະມົນຕີ ແມ່ນໃຫ້ປະກອບເອກະສານຕ່າງໆຄື: ອັດສຳເນົາດຳລັດວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມ, ຂໍ້ຕົກລົງ ຫຼື ມະຕິແຕ່ງຕັ້ງ ຄະນະບໍລິຫານງານ,

ປະທານ, ຮອງປະທານ, ຄະນະກວດກາ, ເລຂາທິການ ສະມາຄົມ, ກົດລະບຽບ ແລະ ແຜນການເຄື່ອນໄຫວ ຂອງສະມາຄົມ ແລ້ວສົ່ງມາຍັງ ທປຄ ເພື່ອພິຈາລະນາ ພາຍໃນກຳນົດ 90 ວັນ ນັບແຕ່ວັນ ດຳລັດວ່າດ້ວຍ ສະມາຄົມ ມີຜົນສັກສິດ ເປັນຕົ້ນໄປ;

2. ສຳລັບສະມາຄົມ ທີ່ໄດ້ສ້າງຕັ້ງຂຶ້ນໂດຍຂໍ້ຕົກລົງຂອງລັດຖະມົນຕີ ຫຼື ທຽບເທົ່າ ເຈົ້າແຂວງ ຫຼື ນະຄອນ ໃຫ້ປະກອບສຳນວນເອກະສານ ຄົບຖ້ວນຕາມກຳນົດໄວ້ ໃນມາດຕາ **13** ຂອງດຳລັດ ແລະ ເອກະສານທີ່ກ່ຽວຂ້ອງເຊັ່ນ: ສຳເນົາຂໍ້ຕົກລົງສ້າງຕັ້ງ, ມະຕິ ຫຼື ຂໍ້ຕົກລົງແຕ່ງຕັ້ງ ຄະນະບໍລິຫານງານ, ປະທານ, ຮອງປະທານ, ຄະນະກວດກາ, ເລຂາທິການສະມາຄົມ, ກົດລະບຽບ ແລະ ແຜນການເຄື່ອນໄຫວ ຂອງສະມາຄົມ ແລ້ວສົ່ງມາຍັງ ທປຄ ສຳລັບສະມາຄົມທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ, ສົ່ງມາຍັງ ອົງການປົກຄອງແຂວງ ຫຼື ນະຄອນ ສຳລັບສະມາຄົມທີ່ເຄື່ອນໄຫວ ໃນຂອບເຂດພາຍໃນ ແຂວງ, ນະຄອນ ເພື່ອຂໍອະນຸມັດ ສ້າງຕັ້ງຄືນໃໝ່ ພາຍໃນກຳນົດ 90 ວັນ ນັບແຕ່ວັນ ດຳລັດວ່າດ້ວຍ ສະມາຄົມ ມີຜົນສັກສິດ ເປັນຕົ້ນໄປ;
3. ຜ່ານການປະຕິບັດຕົວຈິງຖ້າຫາກເຫັນວ່າ ພົບຄວາມຫຍຸ້ງຍາກ, ເນື້ອໃນຈຸດໃດບໍ່ທັນຈະແຈ້ງ, ບໍ່ທັນຄົບຖ້ວນ ຫຼື ເຫັນວ່າບໍ່ຈຳເປັນ ໃຫ້ສະເໜີມາຍັງ ທປຄ ເພື່ອພິຈາລະນາ;
4. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ
ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ

ທ. ບຸນເພັງ ມູນໄພໄຊ